ກະຊວງແຜນການ ແລະ ການລົງທຶນ

Ministry of Planning and Investment

# ພິທີເຊັນບົດບັນທຶກຄວາມເຂົ້າໃຈ MOU ເພື່ອເກັບກຳຂໍ້ມູນຂອບເຂດເນື້ອທີ່ ເພື່ອສຶກສາຄວາມເປັນໄປໄດ້ໃນໂຄງການພັດທະນາພະລັງງານສະອາດຄົບວົງຈອນ ລະຫວ່າງ ລັດຖະບານແຫ່ງ ສ ປປ ລາວ ກັບ CGN Energy Technology laos Co.,Ltd

Oct 20, 2022 | ການເຄື່ອນໄຫວ, ຂ່າວເດັ່ນ




ໃນວັນທີ 17 ຕຸລາ 2022 ທີ່ໂຮງແຮມແລນມາກ ໄດ້ຈັດພິທີເຊັນບົດບັນທຶກຄວາມເຂົ້າໃຈ MOU ເພື່ອເກັບກຳຂໍ້ມູນຂອບເຂດເນື້ອທີ່ເພື່ອສຶກສາຄວາມເປັນໄປໄດ້ໃນໂຄງການພັດທະນາພະລັງງານສະອາດຄົບວົງຈອນ ລະຫວ່າງ ລັດຖະບານແຫ່ງ ສ ປປ ລາວ ກັບ CGN Energy Technology laos Co.,Ltd ເປັນກຽດເຂົ້າຮ່ວມໃນພິທີເຊັນບົດບັນທຶກຄັ້ງນີ້ໂດຍທ່ານ ຄຳເຈນ ວົງໂພສີ ລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ, ທ່ານປອ ດາວວົງ ພອນແກ້ວ ກະຊວງພະລັງງານ ແລະ ບໍ່ແຮ່, ທ່ານ ຄຳໄຫຼ ສີປະເສີດ ເຈົ້າແຂວງຫຼວງນ້ຳທາ, ທ່ານ ບຸນຄົງ ຫຼ້າຈອມພອນ ເຈົ້າແຂວງອຸດົມໄຊ, ທ່ານ ຄຳຜອຍ ວັນນະສານ ເຈົ້າແຂວງຜົ້ງສາລີ ພ້ອມດ້ວຍພາກສ່ວນກ່ຽວຂ້ອງ ແລະ ຍັງມີແຂກເຊີນທາງວີດີໂອ ເຊັ່ນ: ຈາກນະຄອນຫຼວງປັກກິ່ງ, ເສີນເຈິ້ນ, ກວາງໂຈ, ຄຸນໝິງ ສປ ຈີນ ແລະ ກົວລາລຳເປີ ມາເລເຊຍ.

ໂດຍປະຕິບັດຕາມແຈ້ງການຂອງຫ້ອງວ່າການສຳນັກງານ ນາຍົກລັດຖະມົນຕີ ສະບັບເລກທີ 1480 / ຫສນຍ, ລົງວັນທີ 14 ຕຸລາ 2022 ທີ່ມອບສິດໃຫ້ກະຊວງແຜນການ ແລະ ການລົງທຶນ ເປັນຜູ້ເຊັນບົດ

ບັນທຶກຄວາມເຂົ້າໃຈ MOU ຕາງໜ້າເຊັນໂດຍທ່ານ ນາງ ພອນວັນ ອຸທະວົງ ຮອງລັດຖະມົນຕີ ກະຊວງ ແຜນການ ແລະ ການລົງທຶນ ແລະ ເຊັນເປັນພະຍານໂດຍ ທ່ານ ທອງພັດ ອິນທະວົງ ກະຊວງ ພະລັງງານ ແລະ ບໍ່ແຮ່, ຫົວໜ້າພະແນກແຜນການ ແລະ ການລົງທຶນແຂວງຫຼວງນໍ້າທາ, ແຂວງອຸດົມໄຊ ແລະ ແຂວງຜົ້ງສາລີ ແລະ ຕາງໜ້າບໍລິສັດເຊັນໂດຍ Mr DAI Hong Gang ປະທານບໍລິສັດ CGN ແລະ ເຊັນເປັນພະຍານໂດຍ MR WU Xing Hua ປະທານບໍລິສັດ CEO.

ສະໜັບໜຸນໂດຍ / Supported by: ໂຄງການລາວ 033: ໂຄງການສ້າງຄວາມເຂັ້ມແຂງວຽກງານຄຸ້ມຄອງ ຊກພ ຢູ່ ສປປ ລາວ ໃຫ້ມີປະສິດທິຜົນ / Project LAO/033: Strengthening the Effectiveness of ODA Management in LAO PDR.

ສະຫງວນລິຂະສິດ © 2020. ກະຊວງແຜນການ ແລະ ການລົງທຶນ / Copyright © 2020. Ministry of Planning and Investment

ຖະໜົນ ສຸພານຸວົງ, ບ້ານສີຖານເໜືອ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ / Souphanouvong Road, Sithanneua Village, Sikhottabong District, Vientiane Capital, Lao PDR

ໂທ Tel: 021 217020, ແຟັກ Fax: 021 217010, ອີເມວ Email: info@mpi.gov.la or info.mpi2020@gmail.com